ກະຊວງວັດທະນະທຳ... ເລກທີ - 0809 ...ກວດ
ລົງວັນທີ 30 APR 2014
ເວລາ.............
ສົ່ງເຖິງ.............

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------

ລັດຖະບານ ເລກທີ 151 /ລບ

ນະຄອນຫຼວງວຽງຈັນ, ວັນທີ 28.4.2014

# ດຳລັດ
# ວ່າດ້ວຍໂຮງໝໍເອກະຊົນ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ສະບັບເລກທີ 02/ສພຊ, ລົງວັນທີ 08 ກໍລະກົດ 2009;
- ອີງຕາມ ກົດໝາຍວ່າດ້ວຍ ການປິ່ນປົວ ສະບັບເລກທີ 09/ສພຊ, ລົງວັນທີ 09 ພະຈິກ 2005;
- ອີງຕາມ ໜັງສືສະເໜີຂອງ ລັດຖະມົນຕີວ່າການ ກະຊວງສາທາລະນະສຸກ ສະບັບເລກທີ 0206/ສທ, ລົງວັນທີ 12 ກຸມພາ 2014.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງການດຳເນີນກິດຈະການ ໂຮງໝໍເອກະຊົນ ເພື່ອໃຫ້ການຈັດຕັ້ງ ແລະ ການເຄື່ອນໄຫວຂອງໂຮງໝໍດັ່ງກ່າວຖືກຕ້ອງຕາມນະໂຍບາຍຂອງພັກ ແລະ ລະບຽບກົດໝາຍ ຂອງລັດຖະບານ ແນໃສ່ເຮັດໃຫ້ການບໍລິການ ສາທາລະນະສຸກ ມີຄຸນນະພາບ, ມີປະສິດທິພາບ ແລະ ຍຸຕິທຳ.

**ມາດຕາ 2  ໂຮງໝໍເອກະຊົນ**

ໂຮງໝໍເອກະຊົນ ແມ່ນສະຖານທີ່ບໍລິການ ກວດພະຍາດ, ບົ່ງມະຕິ, ປິ່ນປົວ, ຟື້ນຟູ, ສົ່ງເສີມສຸຂະພາບ  ແລະ ກັນພະຍາດ ຂອງພາກເອກະຊົນ ທີ່ໄດ້ຮັບອະນຸຍາດຈາກກະຊວງສາທາລະນະສຸກ ຊຶ່ງມີການປະກອບອຸປະກອນການແພດ, ຕຽງນອນ ແລະ ຜູ້ປະກອບວິຊາຊີບປິ່ນປົວ ຕາມລະບຽບການ.

**ມາດຕາ 3  ຂອບເຂດການນຳໃຊ້ດຳລັດ**

ດຳລັດສະບັບນີ້ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ທີ່ດຳເນີນກິດຈະການໂຮງໝໍເອກະຊົນ ຢູ່ ສປປ ລາວ.

## ໝວດທີ 2
## ປະເພດ, ລັກສະນະ, ຂະໜາດ ໂຮງໝໍເອກະຊົນ

**ມາດຕາ 4  ປະເພດໂຮງໝໍເອກະຊົນ**

ໂຮງໝໍເອກະຊົນປະກອບມີ ສອງ ປະເພດ ດັ່ງນີ້:

1). ໂຮງໝໍເອກະຊົນລົງທຶນ ຮ້ອຍສ່ວນຮ້ອຍ (100%);

2). ໂຮງໝໍຮຸ້ນສ່ວນ ລັດ ກັບ ເອກະຊົນ.

**ມາດຕາ 5 ລັກສະນະໂຮງໝໍເອກະຊົນ**

ໂຮງໝໍເອກະຊົນມີ ສາມ ລັກສະນະ ດັ່ງນີ້:

1). ໂຮງໝໍທົ່ວໄປ ຊຶ່ງແມ່ນສະຖານທີ່ບໍລິການດ້ານການປິ່ນປົວແຕ່ລະຂັ້ນ ໂດຍປະກອບດ້ວຍຫຼາຍວິຊາການທາງການແພດທີ່ແຕກຕ່າງກັນ ແຕ່ອາດຈະລົງເລິກວິຊາການແພດຊ່ຽວຊານໃດໜຶ່ງ;

2). ໂຮງໝໍສະເພາະວິຊາ ຊຶ່ງແມ່ນສະຖານທີ່ບໍລິການດ້ານການປິ່ນປົວແຕ່ລະຂັ້ນ ທີ່ເນັ້ນໃສ່ແຕ່ໝວດວິຊາການແພດໃດໜຶ່ງ ທີ່ເປັນລັກສະນະຊ່ຽວຊານສະເພາະວິຊາເປັນຕົ້ນຕໍ;

3). ໂຮງໝໍການແພດພື້ນເມືອງ ຊຶ່ງແມ່ນສະຖານທີ່ບໍລິການດ້ານການປິ່ນປົວແຕ່ລະຂັ້ນ ທີ່ເນັ້ນໃສ່ວິຊາການແພດພື້ນເມືອງເປັນຕົ້ນຕໍ.

**ມາດຕາ 6  ຂັ້ນ ຂອງໂຮງໝໍເອກະຊົນ**

ໂຮງໝໍເອກະຊົນມີ ສາມ ຂັ້ນ ດັ່ງນີ້:

ຂັ້ນ 1. ເປັນໂຮງໝໍຂະໜາດໃຫຍ່

ຂັ້ນ 2. ເປັນໂຮງໝໍຂະໜາດກາງ

ຂັ້ນ 3. ເປັນໂຮງໝໍຂະໜາດນ້ອຍ

ໂຮງໝໍທຸກປະເພດ, ລັກສະນະ ແລະ ຂັ້ນ ຕ້ອງມີບຸກຄະລະກອນທີ່ມີຄຸນນະພາບ ແລະ ອຸປະກອນການແພດທີ່ທັນສະໄໝ ໃນລະດັບການບໍລິການປິ່ນປົວຂັ້ນສູງສຸດ, ຂັ້ນສູງ ແລະ ຂັ້ນກາງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13, 14 ແລະ 15 ຂອງກົດໝາຍວ່າດ້ວຍ ການປິ່ນປົວ.

## ໝວດທີ 3
## ການຈັດຕັ້ງ ແລະ ການເຄື່ອນໄຫວຂອງໂຮງໝໍເອກະຊົນ

### ມາດຕາ 7 ພາລະບົດບາດຂອງໂຮງໝໍເອກະຊົນ

ໃນການສະໜອງການບໍລິການໂຮງໝໍເອກະຊົນ ຕາມການອະນຸຍາດໃຫ້ດຳເນີນກິດຈະການໂດຍກະຊວງສາທາລະນະສຸກ ແລະ ມີພາລະບົດບາດດຳເນີນການໃຫ້ບໍລິການປິ່ນປົວ ທີ່ໄດ້ມາດຕະຖານ, ມີລະດັບເຕັກນິກ ເຕັກໂນໂລຊີ ທີ່ແຕກຕ່າງກັນ ແລະ ມີຄວາມສະເໝີພາບຕໍ່ໜ້າກົດໝາຍໃນການໃຫ້ບໍລິການ.

### ມາດຕາ 8 ໜ້າທີ່ ການບໍລິການຂອງໂຮງໝໍເອກຊົນ

ໂຮງໝໍເອກະຊົນ ມີໜ້າທີ່ ດັ່ງນີ້:

1. ປະຕິບັດການດ້ານເຕັກນິກ ເຕັກໂນໂລຊີ ການແພດ ທີ່ໄດ້ມາດຕະຖານ ແລະ ຖືກຕ້ອງ;
2. ສ້າງຕັ້ງ, ຈັດຕັ້ງ, ການເຄື່ອນໄຫວ ແລະ ການຄົ້ນຄວ້າວິທະຍາສາດທາງດ້ານການແພດ ຢູ່ທັງພາຍໃນປະເທດ ແລະ ສາກົນໃຫ້ສອດຄ່ອງ;
3. ສົມທົບກັບພາກລັດໃຫ້ການສຶກສາຕໍ່ເນື່ອງ, ຝຶກອົບຮົມແກ່ແພດ, ພະຍາບານ ແລະ ພະນັກງານສາທາລະນະສຸກອື່ນໆ.

### ມາດຕາ 9 ຂອບເຂດສິດຂອງໂຮງໝໍເອກະຊົນ

ໂຮງໝໍເອກະຊົນ ມີຂອບເຂດສິດ ຕົ້ນຕໍ ດັ່ງນີ້:

1. ຕາມເນື້ອໃນທີ່ໄດ້ຮັບອະນຸຍາດ ແລະ ຕາມລະບຽບການທີ່ກ່ຽວຂ້ອງ ຂອງ ສປປ ລາວ;
2. ດຳເນີນວຽກງານຕາມລະບອບລະບຽບຂອງໂຮງໝໍເອກະຊົນ;
3. ຕິດຕໍ່ພົວພັນ, ເຊັນສັນຍາ, ບົດບັນທຶກຕ່າງໆ ກັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ໂດຍສອດຄ່ອງກັບເງື່ອນໄຂ ແລະ ລະບຽບກົດໝາຍ ຂອງ ສປປ ລາວ.

### ມາດຕາ 10 ຜູ້ບໍລິຫານຄຸ້ມຄອງໂຮງໝໍເອກະຊົນ

ຜູ້ອຳນວຍການ ຝ່າຍວິຊາການແພດຂອງໂຮງໝໍເອກະຊົນ ທີ່ຕ່າງປະເທດມາລົງທຶນດຳເນີນກິດຈະການໂຮງໝໍເອກະຊົນ ຕ້ອງມີທ່ານໝໍ ທີ່ເປັນຄົນສັນຊາດລາວຢ່າງໜ້ອຍ ໜຶ່ງ ທ່ານ ທີ່ມີເງື່ອນ